Media Release

Cambodia • Lao PDR • Thailand • Viet Nam
For sustainable development

MEKONG RIVER COMMISSION MRC FOR SUSTAINABLE DEVELOPMENT

ເພື່ອການເຜີຍແຜ່

# ກອງປະຊຸມພາກສ່ວນກ່ຽວຂ້ອງ ແລກປ່ຽນຄໍາເຫັນ ກ່ຽວກັບ ໂຄງການປາກລາຍ, ສະເໜີ ຂັ້ນຕອນ ເພື່ອ ສ້າງຄວາມເຂັ້ມແຂງ ໃນການວາງແຜນອ່າງ ໃນແມ່ນໍ້າຂອງ

**ນະຄອນຫຼວງວຽງຈັນ, ສປປ ລາວ, ວັນທີ 21 ກັນຍາ 2018** – ກອງປະຊຸມພາກສ່ວນກ່ຽວຂ້ອງ ລະດັບພາກພື້ນ ກ່ຽວກັບ ໂຄງການເຂື່ອນໄຟຟ້າພະລັງງານນໍ້າປາກລາຍ ແລະ ບັນດາຂໍ້ລິເລີ່ມອື່ນໆ ທີ່ດໍາເນີນມາເປັນເວລາສອງວັນ ໄດ້ປິດລົງໃນວັນນີ້. ກອງປະຊຸມດັ່ງກ່າວທີ່ຖືກຈັດຂຶ້ນໂດຍ ຄະນະກໍາມາທິການແມ່ນໍ້າຂອງສາກົນ (ຄມສ) ໄດ້ ມີຜູ້ເຂົ້າຮ່ວມຈໍານວນ 160 ຄົນຈາກ ພາກສ່ວນທີ່ກ່ຽວຂ້ອງຕ່າງໆ ມີທັງ ອົງການຈັດຕັ້ງທາງສັງຄົມ, ລັດຖະບານ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ, ນັກວິຊາການ, ພາກເອກະຊົນ ແລະ ຄູ່ຮ່ວມພັດທະນາ. ຜູ້ເຂົ້າຮ່ວມ ໄດ້ ສະແດງຄວາມກັງວົນ ແລະ ສະເໜີຄໍາເຫັນຮ່ວມກັນ ເພື່ອສ້າງຄວາມເຂັ້ມແຂງໃນການວາງແຜນອ່າງ ແລະ ການຄຸ້ມຄອງສິ່ງແວດລ້ອມ ໃນ ແມ່ນໍ້າຂອງ.

ຜູ້ຮັກສາການ ແລະ ຫົວໜ້າພະແນກແຜນການ ປະຈໍາ ກອງເລຂາ ຄມສ, ທ່ານ ອານ ປິກ ຫັດດາ ໄດ້ກ່າວໃນວັນພະຫັດທີ່ຜ່ານມາ ວ່າ: “ຄມສ ເຊື່ອໝັ້ນວ່າ ການມີສ່ວນຮ່ວມ ແລະ ການຮັບຟັງທັດສະນະ ແລະ ຄວາມຕ້ອງການທີ່ແຕກຕ່າງກັນ ຈະສ້າງຄວາມເຂັ້ມແຂງໃນການຮ່ວມມື ດ້ານການຄຸ້ມຄອງນໍ້າ ໃນອ່າງ ແລະ ເປັນໝາກຫົວໃຈໃນການບັນລຸວິໄສທັດ ຂອງ ພວກເຮົາ. ພວກເຮົາບໍ່ສາມາດຮູ້ໄດ້ຄວາມຕ້ອງການຂອງພວກທ່ານ ຖ້າວ່າ ພວກທ່ານບໍ່ສະເໜີ. ພວກເຮົາ ບໍ່ສາມາດ ຕອບສະໜອງຄວາມຕ້ອງການຂອງທ່ານໄດ້ ຖ້າບໍ່ຮູ້ ແລະ ບໍ່ເຂົ້າໃຈວ່າ ຄວາມຕ້ອງການເຫຼົ່ານັ້ນ ແມ່ນຫຍັງ.”

ໃນວັນທໍາອິດຂອງກອງປະຊຸມ, ຜູ້ເຂົ້າຮ່ວມກອງປະຊຸມໄດ້ມີໂອກາດ ທົບທວນ ແລະ ປຶກສາຫາລື ປະເດັນກ່ຽວກັບ ອຸທົກກະວິທະຍາ, ອຸທົກກະສາດ, ການຕົກຕະກອນ, ຄວາມປອດໄພຂອງເຂື່ອນ, ການເດີນເຮືອ, ຄຸນນະພາບນໍ້າ, ການປະມົງ ແລະ ເສດຖະກິດສັງຄົມ ຂອງ ໂຄງການປາກລາຍ ທີ່ມີກໍາລັງການຜະລິດ 770 ເມກາວັດ. ກອງປະຊຸມໄດ້ສະເໜີຫຼາຍຄໍາເຫັນ ຕໍ່ກັບບົດລາຍງານທາງດ້ານວິຊາການຂອງໂຄງການ ເຊິ່ງ ກອງເລຂາ ຄມສ ຈະເປັນຜູ້ຮິບໂຮມ, ຄົ້ນຄວ້າ ແລະ ຮ່າງຂຶ້ນມາ.

ຕົວຢ່າງ: ຜູ້ເຂົ້າຮ່ວມໄດ້ສະເໜີ ໃຫ້ ໂຄງການປາກລາຍ ພິຈາລະນາ ລະບຽບການດໍາເນີນງານຂອງ ບັນດາໂຄງການເຂື່ອນໃນລໍານໍ້າຂອງອື່ນໆ. ໄດ້ມີການສະເໜີໃຫ້ ກອງເລຂາ ຄມສ ແລະ ຂະແໜງການກ່ຽວຂ້ອງ ລະດັບຊາດ ໄດ້ມີການເກັບກໍາຂໍ້ມູນກ່ຽວກັບ ສາຍພັນປາ ເພື່ອປັບປຸງ ການອອກແບບທາງຜ່ານຂອງປາ, ພິຈາລະນາ ສິ່ງທ້າທາຍ ທີ່ມີຕໍ່ບັນດາເຂື່ອນ ທີ່ມີໃນລໍານໍ້າຂອງ. ນອກຈາກນັ້ນ, ຍັງໄດ້ມີການສະເໜີໃຫ້ພິຈາລະນາ ປະເດັນ ບົດບາດຍິງຊາຍໃນໂຄງການດັ່ງກ່າວ.

ພາກສ່ວນກ່ຽວຂ້ອງອື່ນໆ ໄດ້ສະເໜີຄໍາເຫັນໂດຍຜ່ານທາງອອນລາຍ, ໂດຍສະເພາະ ການປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ຂ້າມຊາຍແດນ ແລະ ການປະເມີນຜົນກະທົບແບບສະສົມ ທີ່ມີລັກສະນະ ຄ້າຍຄື

ກັບໂຄງການປາກແບ່ງ. ຜູ້ເຂົ້າຮ່ວມຍັງໄດ້ສະແດງຄວາມກັງວົນ ໂດຍຕັ້ງຄໍາຖາມວ່າ ຜູ້ພັດທະນາໂຄງການໄດ້ພິຈາລະນາ ບັນດານະໂຍບາຍ ແລະ ບົດສຶກສາ ຂອງ ຄມສ ທີ່ມີໃນປັດຈຸບັນ ເຂົ້າໃນການປະເມີນພັດທະນາໂຄງການ ແລ້ວ ຫຼື ບໍ່.

"ໃນການທົບທວນ ເອກະສານໂຄງການແບບລວງເລິກ ຂອງ ພວກເຮົາ ໃນລະຫວ່າງ ຂະບວນການປຶກສາຫາລືກັນກ່ອນນີ້, ພວກເຮົາ ຈະທົບທວນລະດັບຄວາມຄ້າຍຄືກັນລະຫວ່າງໂຄງການປາກລາຍ ແລະ ໂຄງການ ປາກແບ່ງ ໂດຍກໍານົດ ວິທີການເພື່ອປັບປຸງຜົນການປະເມີນ ໂດຍອີງໃສ່ຂໍ້ມູນຂ່າວສານທີ່ມີໃນປັດຈຸບັນ. ທີມງານຂອງພວກເຮົາ ຈະສັງລວມ ປະເດັນ ທີ່ພົບເຫັນໃນບົດລາຍງານທົບທວນທາງດ້ານວິຊາການ ແລະ ຈະສ່ອງແສງ ໃຫ້ເຫັນວ່າ ຜົນກະທົບ ດັ່ງກ່າວ ມີລັກສະນະສົມເຫດສົມຜົນຕໍ່ການປະເມີນໂຄງການ ຫຼື ບໍ່" ກ່າວ ທ່ານ ອານ ປິກ ຫັດດາ, ຜູ້ຮັກສາການ ແລະ ຫົວໜ້າພະແນກແຜນການ.

ຂໍ້ສະເໜີ ຂອງ ພາກສວນທີ່ກ່ຽວຂ້ອງທັງໝົດ ແມ່ນໄດ້ຖືກບັນທຶກ ແລະ ສັງລວມໃນບົດລາຍງານ ຂອງ ກອງປະຊຸມ, ເຊິ່ງຈະໄດ້ນໍາໄປພິຈາລະນາ ແລະ ສະທ້ອນ ໃນບົດລາຍງານທົບທວນທາງດ້ານວິຊາການ. ບົດລາຍງານທົບທວນທາງດ້ານວິຊາການ ຈະມີທັງການ ປະເມີນດ້ານວິຊາການ ຂອງ ໂຄງການທີ່ສະເໜີ ແລະ ຈະໄດ້ຖືກນໍາສົ່ງໃຫ້ກັບບັນດາປະເທດສະມາຊິກຂອງ ຄມສ, ໂດຍສະເພາະ ປະເທດທີ່ສະເໜີໂຄງການ ເພື່ອພິຈາລະນາ ແລະ ອາດຈະລວມເຂົ້າໃນ ຖະແຫຼງການຮ່ວມ ແລະ ແຜນດໍາເນີນງານຮ່ວມກັນ.

ທ່ານ ນາງ ບຸນຄໍ້າ ວໍລະຈິດ, ຮອງລັດຖະມົນຕີ ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ຂອງ ສປປ ລາວ ໄດ້ກ່າວໃນມື້ເປີດກອງປະຊຸມວ່າ: "ສປປ ລາວ ຍາມໃດ ກໍໃຫ້ຄວາມສໍາຄັນ ແລະ ເອົາໃຈໃສ່ເປັນພິເສດ ຕໍ່ຫຼັກການ ການພັດທະນາແບບຍືນຍົງ ພາຍໃຕ້ສັນຍາແມ່ນໍ້າຂອງ ປີ 1995 ແລະ ບັນດາລະບຽບການ ແລະ ບົດແນະນໍາ ຂອງ ຄມສ. ການຮັບມື ກັບສິ່ງທ້າທາຍ ຂອງ ການພັດທະນາແບບຍືນຍົງ ຈະບໍ່ສາມາດເປັນໄປໄດ້ ຖ້າຂາດການສະໜັບສະໜູນ ແລະ ການຮ່ວມມືທີ່ສໍາຄັນ ຈາກ ພາກສວນທີ່ກ່ຽວຂ້ອງຂອງພວກເຮົາ."

ໃນວັນທີສອງ ຂອງ ກອງປະຊຸມ, ຜູ້ເຂົ້າຮ່ວມ ຍັງໄດ້ມີໂອກາດຮັບຟັງ ຄວາມຄືບໜ້າກ່ຽວກັບບັນດາວຽກງານ ຂອງ ຄມສ. ໃນນັ້ນມີ ຄວາມຄືບໜ້າ ແລະ ຜົນການປຶກສາຫາລື ກ່ຽວກັບ ແຜນດໍາເນີນງານຮ່ວມກັນ ຂອງ ໂຄງການປາກແບ່ງ, ການປະເມີນການປັບປຸງການອອກແບບ ໂຄງການໄຊຍະບູລີ ແລະ ບົດແນະນໍາ ການອອກແບບເບື້ອງຕົ້ນເຂື່ອນໃນລໍານໍ້າຂອງ ໃນອ່າງແມ່ນໍ້າຂອງ ຕອນລຸ່ມ.

ກອງປະຊຸມ ໄດ້ສະແດງຄວາມຍິນດີ ຕໍ່ ກັບໝາກຜົນ ເຫຼົ່ານີ້ ທີ່ຈະຊ່ວຍປັບປຸງ ການວາງແຜນ ແລະ ການຄຸ້ມຄອງອ່າງນໍ້າ ເຊິ່ງ ເປັນຜົນມາຈາກການປຶກສາຫາລື ແລະ ການປະກອບສ່ວນ ຂອງ ພາກສ່ວນກ່ຽວຂ້ອງ ໃນຂະບວນການປຶກສາຫາລືກັນກ່ອນ ຜ່ານໆມາ.

ຕົວຢ່າງ: ຂະບວນການປຶກສາຫາລືກັນກ່ອນ ຂອງ ໂຄງການເຂື່ອນໄຊຍະບູລີ, ດອນສາໂຮງ ແລະ ປາກແບ່ງ ໄດ້ຊີ້ແຈງໃຫ້ເຫັນ ຄວາມຈໍາເປັນໃນການປັບປຸງ ຍຸດທະສາດ ພະລັງງານນໍ້າໃນອ່າງແມ່ນໍ້າຂອງ ຂອງ ຄມສ. ເອກະສານດັ່ງກ່າວແນໃສ່ ຊ່ວຍປະເທດສະມາຊິກ ໃນການແບ່ງປັນຜົນປະໂຫຍດຮ່ວມກັນ ແບບຂ້າມຊາຍແດນ, ຄຽງຄູ່ກັບການຮັບປະກັນທາງດ້ານສະບຽງອາຫານ, ນໍ້າ ແລະ ພະລັງງານ.

ກອງປະຊຸມ ໄດ້ຮັບຟັງຄວາມຄືບໜ້າໃນການປັບປຸງ ຍຸດທະສາດ ທີ່ສຳເລັດກາຍເຄິ່ງທາງແລ້ວ ແລະ ບົດແນະນຳ ກຳລັງຢູ່ໃນໄລຍະທົບທວນສຸດທ້າຍໂດຍບັນດາປະເທດສະມາຊິກ.

ກອງປະຊຸມພາກສວນກ່ຽວຂ້ອງລະດັບພາກພື້ນ ແມ່ນຈັດຄຽງຄູ່ກັບ ກອງປະຊຸມປຶກສາຫາລືລະດັບຊາດ ແລະ ໃຫ້ ໂອກາດ ພາກສວນກ່ຽວຂ້ອງ ທີ່ບໍ່ໄດ້ເຂົ້າຮ່ວມຂະບວນການປຶກສາຫາລືລະດັບຊາດ ໄດ້ສາມາດ ສະແດງຄຳເຫັນ ແລະ ຮຽນຮູ້ເພີ່ມເຕີມ ກ່ຽວກັບໂຄງການ ແລະ ຂະບວນການປຶກສາຫາລືກັນກ່ອນ.

ຄັ້ງນີ້ ແມ່ນຄັ້ງທີສີ່ ທີ່ ຄມສ ໄດ້ດຳເນີນການປຶກສາຫາລືກັນກ່ອນ ພາຍໃຕ້ ລະບຽບວ່າດ້ວຍ ການແຈ້ງໃຫ້ກັນຊາບ, ການປຶກສາຫາລືກັນກ່ອນ ແລະ ການເຮັດຂໍ້ຕົກລົງກັນ ເຊິ່ງ ໄລຍະຜ່ານມາ ລວມມີ ໂຄງການເຂື່ອນໄຊຍະບູລີ 1.285 ເມກາວັດ, ໂຄງການເຂື່ອນ ດອນສາໂຮງ 240 ເມກາວັດ ແລະ ໂຄງການເຂື່ອນປາກແບ່ງ 912 ເມກາວັດ.

ການປຶກສາຫາລືກັນກ່ອນ ຂອງ ໂຄງການປາກລາຍ ໄດ້ເລີ່ມຢ່າງເປັນທາງການໃນວັນທີ 8 ສິງຫາ 2018 ແລະ ຈະ ສືບຕໍ່ໄປຈົນຮອດ ເດືອນມີນາ 2019. ຮອດເວລານັ້ນ, ຄະນະເຮັດວຽກສະເພາະກິດ ຂອງ ຄະນະກຳມະການຮ່ວມ ຈະໄດ້ນຳສິ່ງຄຳເຫັນ ໃຫ້ກັບ ຄະນະກຳມະການຮ່ວມ ຄມສ ເຊິ່ງເປັນການຈັດຕັ້ງທີ່ມີໜ້າທີ່ ໃນການປະຕິບັດ ນະໂຍບາຍ ຂອງ ຄມສ ທີ່ຕາງໜ້າ ສີ່ປະເທດສະມາຊິກ. ຂະບວນການປຶກສາຫາລືກັນກ່ອນ ຈະດຳເນີນເປັນໄລະ ຍະ ເວລາ ຫົກເດືອນ ແລະ ສາມາດຂະຫຍາຍເວລາໄດ້ຕາມການເຫັນດີ ຂອງ ຄະນະກຳມະການຮ່ວມ.

ກອງປະຊຸມພາກສວນກ່ຽວຂ້ອງລະດັບພາກພື້ນ ຄັ້ງຕໍ່ໄປ ຂອງ ໂຄງການປາກລາຍ ແມ່ນ ຈະໄດ້ຈັດຂຶ້ນໃນກາງ ເດືອນ ມັງກອນ ຂອງ ປີໜ້າ.

ໝາຍເຫດ:

ຄມສ ແມ່ນ ອົງການຈັດຕັ້ງ ລະຫວ່າງລັດຖະບານ ເພື່ອການປຶກສາຫາລື ແລະ ການຮ່ວມມື ໃນອ່າງແມ່ນ້ຳຂອງ ຕອນລຸ່ມ, ສ້າງຕັ້ງຂຶ້ນໃນປີ 1995 ອີງຕາມສັນຍາແມ່ນ້ຳຂອງ ລະຫວ່າງ ຣາຊະອານາຈັກກຳປູເຈຍ, ສປປ ລາວ , ຣາ ຊະອານາຈັກໄທ ແລະ ສສ ຫວຽດນາມ. ອົງການດັ່ງກ່າວ ເປັນກົນໄກລະດັບພາກພື້ນ ເພື່ອ ການຮ່ວມມື ກ່ຽວກັບ ນ້ຳ ແລະ ທັງເປັນ ສູນກາງຄວາມຮູ້ດ້ານການຄຸ້ມຄອງຊັບພະຍາກອນນ້ຳເພື່ອການພັດທະນາ ທີ່ຍືນຍົງ ຂອງ ພາກ ພື້ນ.

- ຈົບ -

ຂໍ້ມູນເພີ່ມເຕີມ, ກະລຸນາຕິດຕໍ່ :
ທ່ານ ໂສພຶກ ແມ
ເຈົ້າໜ້າທີ່ ການ ຂ່າວສານ
ກອງເລຂາ ຄະນະກຳມາທິການແມ່ນ້ຳຂອງສາກົນ
ອີເມວ: sopheak@mrcmekong.org
ໂທລະສັບ: +856-21-263263, ຕໍ່. 4070 (GMT+7)
ໂທລະສັບມືຖື : +856-20- 92479737 / 93999047

###